# ກະຊວງການຕ່າງປະເທດ

# ການຮັບເອົາການຊ່ວຍເຫລືອຈາກຕ່າງປະເທດ ໂດຍອົງການຈັດຕັ້ງທາງສັງຄົມ

ສະເໜີໂດຍ: ກົມອົງການຈັດຕັ້ງສາກົນ,
ກະຊວງການຕ່າງປະເທດ

021 453713

# ໂຄງປະກອບຂອງບົດສະເໜີ

I. ຂໍ້ແນະນໍາ ເລກທີ: 4289/ຕປທ.ຈສກ, 22/06/2018

II. ຂັ້ນຕອນອະນຸມັດຮັບການຊ່ວຍເຫລືອ/ໂຄງການ

III. ສິ່ງທ້າທາຍ ແລະ ຄວນເອົາໃຈໃສ່

# ຂົງເຂດຮັບການຊ່ວຍເຫລືອ

- ຂະແໜງກະສິກຳ
- ຂະແໜງສາທາລະນະສຸກ
- ຂະແໜງສຶກສາ ແລະ ກິລາ
- ຂະແໜງການອື່ນໆ: ຍຸດຕິທຳ, ສົງເຄາະ, ສິ່ງແວດລ້ອມ,….
- ການຊ່ວຍເຫລືອ/ໂຄງການມີຢູ່ທຸກແຂວງ ລວມທັງ ນະຄອນຫລວງວຽງຈັນ

# I. ຂໍ້ແນະນຳ ເລກທີ: 4289/ຕປທ.ຈສກ, 22/06/2018, ປະກອບມີ 11 ຂໍ້.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ເລກທີ: 004289/ຕປທ.ຈສກ

ນະຄອນຫຼວງວຽງຈັນ, ວັນທີ 22 ມິຖຸນາ 2018

## ຂໍ້ແນະນຳ

ການຈັດຕັ້ງປະຕິບັດ ມາດຕາ 55 ວັກສອງ ຂອງດຳລັດ ວ່າດ້ວຍສະມາຄົມ ກ່ຽວກັບການອະນຸມັດໃຫ້ສະມາຄົມ ແລະ ມູນນິທິ ຮັບເອົາທຶນ, ຊັບສິນ ແລະ ຊ່ຽວຊານ ຈາກຕ່າງປະເທດ

1. ຈຸດປະສົງ

ຂໍ້ແນະນຳສະບັບນີ້ ເພື່ອຜັນຂະຫຍາຍ ມາດຕາ 55 ວັກສອງ ຂອງດຳລັດ ວ່າດ້ວຍສະມາຄົມ ໃຫ້ເປັນອັນລະອຽດ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດມາດຕາດັ່ງກ່າວ ມີຄວາມສະດວກ, ຖືກຕ້ອງ ແລະ ເປັນເອກະພາບກັນທົ່ວປະເທດ ເຮັດໃຫ້ການຄຸ້ມຄອງການຊ່ວຍເຫຼືອຂອງຕ່າງປະເທດ ມີປະສິດທິຜົນສູງ ແລະ ສອດຄ່ອງກັບແນວທາງນະໂຍບາຍ ກໍ່ຄື ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

## 2. ຂອບເຂດການນຳໃຊ້

ຂໍ້ແນະນຳສະບັບນີ້ ນຳໃຊ້ສຳລັບ ສະມາຄົມ ແລະ ມູນນິທິ ທີ່ໄດ້ຮັບການອະນຸມັດສ້າງຕັ້ງຈາກອົງການທີ່ມີສິດອະນຸມັດສ້າງຕັ້ງ ແລະ ຈົດທະບຽນ ຕາມດຳລັດ ວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017 ແລະ ດຳລັດ ວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011.

## 3. ເງື່ອນໄຂການຮັບເອົາທຶນ ແລະ ຊັບສິນ ຈາກຕ່າງປະເທດ

ສະມາຄົມ ແລະ ມູນນິທິ ຕ້ອງມີແຜນງານ, ໂຄງການ ຫຼື ກິດຈະກຳ ທີ່ໄດ້ຮັບການເຫັນດີຈາກກະຊວງ ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງລັດ ພ້ອມທັງສອດຄ່ອງຕາມແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ.

ສະມາຄົມ ແລະ ມູນນິທິ ສາມາດຮັບເອົາທຶນ ແລະ ຊັບສິນຈາກຕ່າງປະເທດໄດ້ ແຕ່ຕ້ອງແມ່ນທຶນ ແລະ ຊັບສິນ ທີ່ມີທີ່ມາຈະແຈ້ງ, ປອດໃສ ແລະ ສາມາດກວດສອບໄດ້.

4. ການພິຈາລະນາອະນຸມັດຮັບເອົາທຶນ, ຊັບສິນ ຈາກຕ່າງປະເທດ

4.1. ການຮັບເອົາທຶນ, ຊັບສິນ ທີ່ມີມູນຄ່າຫຼາຍກວ່າ 500.000.000 ກີບ (ຫ້າຮ້ອຍລ້ານກີບ) ສະມາຄົມ ຫຼື ມູນນິທິ ຕ້ອງປະກອບເອກະສານ ດັ່ງນີ້:

- ໜັງສືສະເໜີຂໍອະນຸມັດຮັບເອົາທຶນ, ຊັບສິນຈາກຕ່າງປະເທດ ຂອງສະມາຄົມ ຫຼື ມູນນິທິ ໂດຍໄດ້ຮັບການອະນຸມັດຈາກກະຊວງຂະແໜງການທີ່ກ່ຽວຂ້ອງ;
- ບົດສະເໜີແຜນງານ, ໂຄງການ ຫຼື ກິດຈະກຳ ທີ່ໄດ້ຮັບການເຫັນດີຈາກກະຊວງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;
- ສຳເນົາໃບອະນຸມັດສ້າງຕັ້ງສະມາຄົມ ຫຼື ມູນນິທິ;
- ພາຍຫຼັງໄດ້ຮັບທຶນແລ້ວ, ສະມາຄົມ ຫຼື ມູນນິທິ ຕ້ອງໄດ້ເຮັດບົດບັນທຶກຄວາມເຂົ້າໃຈ (MOU) ຮ່ວມກັບກະຊວງຂະແໜງການທີ່ກ່ຽວຂ້ອງ ແລ້ວສະເໜີຂໍອະນຸມັດຈັດຕັ້ງປະຕິບັດນຳ ກະຊວງການຕ່າງປະເທດ;
- ການພິຈາລະນຸມັດຢ່າງຊ້າສຸດບໍ່ໃຫ້ເກີນ 15 ວັນລັດຖະການ ນັບແຕ່ມື້ໄດ້ຮັບໜັງສືສະເໜີທີ່ຖືກຕ້ອງ ແລະ ຄົບຖ້ວນ ຈາກກະຊວງຂະແໜງການທີ່ກ່ຽວຂ້ອງ.

**4.2. ການຮັບເອົາທຶນ, ຊັບສິນ ທີ່ມີມູນຄ່າ 500.000.000 ກີບ (ຫ້າຮ້ອຍລ້ານກີບ) ລົງມາ:**

ສະມາຄົມ ຫຼື ມູນນິທິ ສາມາດຮັບເອົາທຶນ ຫຼື ຊັບສິນ ທີ່ມີມູນຄ່າ 500.000.000 ກີບ ລົງມາ ໂດຍບໍ່ຕ້ອງຍື່ນເອກະສານຂໍອະນຸມັດ ຈາກກະຊວງການຕ່າງປະເທດ ແຕ່ຕ້ອງຜ່ານການເຫັນດີຈາກ ກະຊວງຂະແໜງການທີ່ກ່ຽວຂ້ອງ ພ້ອມທັງສອດຄ່ອງກັບບົດສະເໜີແຜນງານ, ໂຄງການ ຫຼື ກິດຈະກຳ. ພາຍຫຼັງໄດ້ຮັບທຶນແລ້ວ ຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດ ແລະ ອົງການທີ່ອະນຸມັດ ສ້າງຕັ້ງຊາບ ພາຍໃນ 10 ວັນລັດຖະການ ພ້ອມທັງຄັດຕິດສ□າເນົາໜັງສືຢັ້ງຢືນການໃຫ້ທຶນຈາກຜູ້ໃຫ້ ທຶນ ຫຼື ຊັບສິນ.

**5. ການອະນຸມັດໃຫ້ ສະມາຄົມ ຫຼື ມູນນິທິ ຈັດຕັ້ງປະຕິບັດກິດຈະກຳຮ່ວມກັບ ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (INGOs), ສະມາຄົມ, ມູນນິທິ, ກອງທຶນ, ສະຖາບັນ, ສະໂມສອນ, ນິຕິບຸກຄົນ ຂອງຕ່າງປະເທດ.**

ສະມາຄົມ ຫຼື ມູນນິທິ ສາມາດປະຕິບັດກິດຈະກຳຢູ່ພາຍໃຕ້ໂຄງການຮ່ວມມື ຫຼື ບົດບັນທຶກຄວາມເຂົ້າໃຈ ຂອງອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ສະມາຄົມ, ມູນນິທິ, ກອງທຶນ, ສະຖາບັນ, ສະໂມສອນ, ນິຕິບຸກຄົນ ຂອງຕ່າງປະເທດ ທີ່ເຮັດຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ຕ້ອງປະຕິບັດດັ່ງນີ້:

- ຊື່ຂອງສະມາຄົມ ຫຼື ມູນນິທິ ທີ່ໄດ້ຮັບການຕົກລົງເຫັນດີຈາກ ກະຊວງຂະແໜງການທີ່ກ່ຽວຂ້ອງ ຕ້ອງໄດ້ຖືກລະບຸໄວ້ໃນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ລັດຖະບານ ແລະ ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ສະມາຄົມ, ມູນນິທິ, ກອງທຶນ, ສະຖາບັນ, ສະໂມສອນ, ນິຕິບຸກຄົນ ຂອງຕ່າງປະເທດ;
- ໃນກໍລະນີທີ່ບໍ່ສາມາດລະບຸຊື່ສະມາຄົມ ຫຼື ມູນນິທິ ໃສ່ໃນເອກະສານເບື້ອງຕົ້ນໄດ້ ການຄັດເລືອກສະມາຄົມ ຫຼື ມູນນິທິ ຕ້ອງໄດ້ຜ່ານການຕົກລົງເຫັນດີຈາກ ກະຊວງຂະແໜງການທີ່ກ່ຽວຂ້ອງ, ກະຊວງພາຍໃນ ແລະ ກະຊວງການຕ່າງປະເທດ;
- ລະບຸລາຍລະອຽດກ່ຽວກັບກິດຈະກຳ ພ້ອມທັງງົບປະມານ ແລະ ໄລຍະເວລາສຳລັບກິດຈະກຳ ທີ່ຈະໃຫ້ສະມາຄົມ ຫຼື ມູນນິທິ ເປັນຜູ້ຈັດຕັ້ງປະຕິບັດຢ່າງຈະແຈ້ງ ຕາມການຕົກລົງເຫັນດີຂອງ ກະຊວງຂະແໜງການທີ່ກ່ຽວຂ້ອງ.

6. **ການອະນຸມັດໃຫ້ສະມາຄົມ ຫຼື ມູນນິທິ ຮັບເອົາທຶນຈາກ ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ.**

ສະມາຄົມ ຫຼື ມູນນິທິ ທີ່ມີຈຸດປະສົງຮັບເອົາທຶນຈາກ ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ລະຫວ່າງລັດຖະບານ ແລະ ປະເທດທີ່ໃຫ້ທຶນ ເພື່ອຈັດຕັ້ງປະຕິບັດກິດຈະກໍາ ໃນຂອບໂຄງການຮ່ວມມືສອງຝ່າຍ ຫຼື ຫຼາຍຝ່າຍ ສາມາດສະເໜີໂດຍກົງ ຕໍ່ກະຊວງຂະແໜງການທີ່ເປັນເຈົ້າຂອງໂຄງການ ເພື່ອພິຈາລະນາອະນຸມັດ ຕາມລະບຽບການຂອງລັດ.

7. **ການອະນຸມັດໃຫ້ ຕາງໜ້າຜູ້ໃຫ້ທຶນມາຢ້ຽມຢາມ ແລະ ຕິດຕາມຄວາມຄືບໜ້າຂອງໂຄງການ.**

ສະມາຄົມ ຫຼື ມູນນິທິ ທີ່ມີຈຸດປະສົງເຊີນຕາງໜ້າຜູ້ໃຫ້ທຶນມາຢ້ຽມຢາມ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການ ຕ້ອງປະຕິບັດດັ່ງນີ້:

- ໜັງສືສະເໜີຂໍອະນຸມັດ ພ້ອມທັງສໍາເນົາໜັງສືຜ່ານແດນຂອງຜູ້ຕາງຫນ້າ ຫຼື ຜູ້ໃຫ້ທຶນດັ່ງກ່າວ;
- ສໍາເນົາໃບອະນຸມັດໂຄງການ ຫຼື ກິດຈະກໍາ;
- ສໍາເນົາໜັງສືອະນຸມັດສ້າງຕັ້ງຂອງ ສະມາຄົມ ຫຼື ມູນນິທິ;
- ໜັງສືການຢັ້ງຢືນເຫັນດີຈາກ ກະຊວງຂະແໜງການທີ່ກ່ຽວຂ້ອງ ສະເໜີຂໍອະນຸມັດນໍາ ກະຊວງການຕ່າງປະເທດ;
- ການພິຈາລະນາອະນຸມັດຢ່າງຊ້າສຸດບໍ່ໃຫ້ເກີນ 15 ວັນລັດຖະການ ພາຍຫລັງໄດ້ຮັບຫນັງສືສະເໜີຈາກ ກະຊວງຂະແໜງການທີ່ກ່ຽວຂ້ອງ.

## 8. ການອະນຸມັດໃຫ້ສະມາຄົມ ແລະ ມູນນິທິ ຮັບເອົາຊ່ຽວຊານ ຫຼື ອາສາສະໝັກ

ສະມາຄົມ ຫຼື ມູນນິທິ ທີ່ມີຈຸດປະສົງຮັບເອົາຊ່ຽວຊານ ຫຼື ອາສາສະໝັກ ມາຮ່ວມເຮັດວຽກນໍາ ຕ້ອງແມ່ນຊ່ຽວຊານ ຫຼື ອາສາສະໝັກ ທີ່ມີຄວາມຮູ້ຄວາມສາມາດ ແລະ ວິຊາການສະເພາະດ້ານ ທີ່ຖືກຕ້ອງຕາມວຽກງານ ແລະ ຄວາມຈໍາເປັນພິເສດຂອງສະມາຄົມ ຫຼື ມູນນິທິ ເປັນແຕ່ລະກໍລະນີ.

ສະມາຄົມ ຫຼື ມູນນິທິ ຕ້ອງປະກອບເອກະສານດັ່ງນີ້:

- ໜັງສືສະເໜີຂໍອະນຸມັດຮັບເອົາຊ່ຽວຊານ ຫຼື ອາສາສະໝັກ;
- ຊີວະປະຫວັດ ແລະ ສໍາເນົາໜັງສືຜ່ານແດນຂອງຊ່ຽວຊານ ຫຼື ອາສາສະໝັກ;
- ໃບອະນຸມັດໂຄງການ ຫຼື ກິດຈະກໍາ;
- ໃບອະນຸມັດສ້າງຕັ້ງຂອງ ສະມາຄົມ ຫຼື ມູນນິທິ;
- ໜັງສືການຢັ້ງຢືນເຫັນດີຈາກ ກະຊວງຂະແໜງການທີ່ກ່ຽວຂ້ອງ ສະເໜີຂໍອະນຸມັດນໍາ ກະຊວງການຕ່າງປະເທດ;
- ການພິຈາລະນາອະນຸມັດຢ່າງຊ້າສຸດບໍ່ໃຫ້ເກີນ 15 ວັນລັດຖະການ ພາຍຫລັງໄດ້ຮັບໜັງສືສະເໜີຈາກກະຊວງຂະແໜງການທີ່ກ່ຽວຂ້ອງ.

9. ຂັ້ນຕອນອະນຸມັດໂຄງການນັບແຕ່ຂັ້ນທ້ອງຖິ່ນຈົນເຖິງຂັ້ນສູນກາງ

ຂັ້ນຕອນການດຳເນີນເອກະສານ ແລະ ກຳນົດເວລາ ການພິຈາລະນາອະນຸມັດໂຄງການຢູ່ຂັ້ນທ້ອງຖິ່ນ (ເມືອງ ແລະ ແຂວງ) ຢ່າງຊ້າສຸດບໍ່ໃຫ້ເກີນ 30 ວັນລັດຖະການ ແລະ ຢູ່ຂັ້ນສູນກາງ (ກະຊວງຂະແໜງການ) ຢ່າງຊ້າສຸດບໍ່ໃຫ້ເກີນ 30 ວັນລັດຖະການ ໂດຍປະຕິບັດຕາມແຈ້ງການຂອງ ກະຊວງການຕ່າງປະເທດ ສະບັບເລກທີ 5788/ຕປທ.ຈສກ.3.9, ລົງວັນທີ 01 ສິງຫາ 2016.

10. ການຕິດຕາມ, ປະເມີນຜົນ ແລະ ການລາຍງານ:

- ສະມາຄົມ ແລະ ມູນນິທິ ຕ້ອງສົມທົບກັບ ຄູ່ຮ່ວມງານພາກລັດທີ່ກ່ຽວຂ້ອງ, ກະຊວງພາຍໃນ, ກະຊວງການຕ່າງປະເທດ ແລະ ພະແນກການຕ່າງປະເທດແຂວງ/ນະຄອນຫຼວງ ທີ່ກ່ຽວຂ້ອງ ຕິດຕາມປະເມີນຜົນການຈັດຕັ້ງປະຕິບັດໂຄງການ ຫຼື ກິດຈະກຳ ເປັນແຕ່ລະໄລຍະ ຄື: 6 ເດືອນ, ປະຈຳປີ, ເຄິ່ງໂຄງການ ແລະ ທ້າຍໂຄງການ.
- ສະມາຄົມ ແລະ ມູນນິທິ ຕ້ອງເຮັດບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດໂຄງການ ຫຼື ກິດຈະກຳ ແລະ ການໃຊ້ຈ່າຍງົບປະມານ ທີ່ໄດ້ຮັບຈາກຕ່າງປະເທດ ໃຫ້ແກ່ຄູ່ຮ່ວມງານຫລັກພາກລັດ, ກະຊວງພາຍໃນ, ກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ, ພະແນກການຕ່າງປະເທດແຂວງ/ນະຄອນຫຼວງ ແລະ ພະແນກແຜນການ ແລະ ການລົງທຶນ (ຂະແໜງຮ່ວມມື) ແຂວງ/ນະຄອນຫຼວງ ທີ່ກ່ຽວຂ້ອງທຸກໆ 6 ເດືອນ, ປະຈຳປີ, ເຄິ່ງໂຄງການ ແລະ ທ້າຍໂຄງການ.

11. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງອ້ອມຂ້າງສູນກາງ ແລະ ອໍານາດການປົກຄອງທ້ອງຖິ່ນ ລວມທັງພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ປະຕິບັດ ແລະ ໃຫ້ການຮ່ວມມື ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

ຂໍ້ແນະນໍາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ

ສະເຫລີມໄຊ ກົມມະສິດ

**ສໍາເນົາສົ່ງ:**

| | |
|---|---|
| 1. ຫ້ອງວ່າການສູນກາງພັກ | 1 ສະບັບ |
| 2. ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ | 1 ສະບັບ |
| 3. ຫ້ອງວ່າການສະພາແຫ່ງຊາດ | 1 ສະບັບ |
| 4. ບັນດາກະຊວງ, ອົງການລັດທຽບເທົ່າ | ບ່ອນລະ 1 ສະບັບ |
| 5. ບັນດາແຂວງທົ່ວປະເທດ | ບ່ອນລະ 1 ສະບັບ |
| 6. ບັນດາສະຖານທູດຕ່າງປະເທດ ປະຈໍາ ສປປ ລາວ | ບ່ອນລະ 1 ສະບັບ |
| 7. ບັນດາອົງການຈັດຕັ້ງສາກົນ; ອົງການ INGOs, ສະມາຄົມ ແລະ ມູນນິທິ ຂອງລາວ | ບ່ອນລະ 1 ສະບັບ |

# II. ຂັ້ນຕອນອະນຸມັດການຊ່ວຍເຫລືອ/ ໂຄງການ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ເລກທີ 5788 /ຕປທ.ຈສກ.3.9

ນະຄອນຫຼວງວຽງຈັນ, ວັນທີ 01 ສິງຫາ 2016

**ໃບແຈ້ງການ**

**ຮຽນ:** - ທ່ານ ຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂັ້ນສູນກາງ,

- ທ່ານ ຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂັ້ນທ້ອງຖິ່ນ.

**ເລື່ອງ:** ແຈ້ງການແນະນຳກ່ຽວກັບຂັ້ນຕອນການອະນຸມັດໂຄງການ ນັບແຕ່ຂັ້ນທ້ອງຖິ່ນຈົນເຖິງຂັ້ນສູນກາງ.

- ອີງຕາມຜົນຂອງກອງປະຊຸມປຶກສາຫາລືປະຈຳໄຕມາດແບບບໍ່ເປັນທາງການລະຫວ່າງຜູ້ຕາງໜ້າ ບັນດາກະຊວງຂະແໜງການພາກລັດ ກັບ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (ອສບລ) ໃນວັນທີ 30 ມິຖຸນາ 2016.

ກະຊວງການຕ່າງປະເທດ ໃນນາມປະທານຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂັ້ນສູນກາງ, ຂໍຖືເປັນກຽດແຈ້ງມາຍັງບັນດາກະຊວງຂະແໜງການອ້ອມຂ້າງສູນກາງ, ບັນດາແຂວງ ແລະ ເມືອງ ໃນຂອບເຂດທົ່ວປະເທດຊາບວ່າ ເພື່ອເປັນເອກະພາບກັນໃນຂອບເຂດທົ່ວປະເທດ ກ່ຽວກັບການອະນຸມັດຮັບເອົາໂຄງການຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານທີ່ໄດ້ຮັບການອະນຸຍາດໃຫ້ປະຕິບັດງານຢູ່ ສປປ ລາວ, ກະຊວງການຕ່າງປະເທດ ສະເໜີໃຫ້ບັນດາກະຊວງ, ແຂວງ, ເມືອງ ປະຕິບັດຂັ້ນຕອນການດຳເນີນເອກະສານ ແລະ ກຳນົດເວລາ ຂອງການອະນຸມັດໂຄງການດັ່ງກ່າວ ດັ່ງລຸ່ມນີ້:

1. ຂັ້ນຕອນທີ I:

ການເກັບກຳຂໍ້ມູນ ແມ່ນຈະບໍ່ມີການກຳນົດເວລາ, ຈະໄວຫຼືຊ້າຂຶ້ນກັບການປະສານງານ ແລະ ເຮັດວຽກຮ່ວມກັນ ລະຫວ່າງອົງການ INGOs ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ, ລວມທັງການຮ່າງ MOU ເບື້ອງຕົ້ນ.

2. ຂັ້ນຕອນທີ II:

- ຜ່ານຮ່າງ MOU ເບື້ອງຕົ້ນ ແມ່ນໃຫ້ຖືເອົາມື້ຈັດກອງປະຊຸມ ຜ່ານຮ່າງ MOU ເບື້ອງຕົ້ນ ຢູ່ຂັ້ນທ້ອງຖິ່ນ ເປັນມື້ທຳອິດ ໃນຂະບວນການພິຈາລະນາ ອະນຸມັດໂຄງການ ໂດຍຜູ້ເຂົ້າຮ່ວມກອງປະຊຸມ ປະກອບດ້ວຍ:
    1) ພະແນກຕ່າງປະເທດແຂວງ;
    2) ພະແນກການຕ່າງໆທີ່ກ່ຽວຂ້ອງພາຍໃນແຂວງ;
    3) ຫ້ອງການຕ່າງໆທີ່ກ່ຽວຂ້ອງພາຍໃນເມືອງ;
    4) ອົງການ INGOs.
- ຈາກນັ້ນ ອົງການ NGO ແລະ ທ້ອງຖິ່ນມີເວລາຝ່າຍລະ 15 ວັນລັດຖະການ, ໃນການປັບປຸງຮ່າງ MOU ເບື້ອງຕົ້ນຄືນ ຕາມຄຳເຫັນຂອງທີ່ປະຊຸມ.
- ພາຍຫຼັງທີ່ໄດ້ຮັບການປັບປຸງ ຂອງຝ່າຍກ່ຽວຂ້ອງ ແລະ ເປັນເອກະພາບກັນແລ້ວ ຂັ້ນເມືອງເຮັດໜັງສືສະເໜີຫາຂັ້ນແຂວງ ເພື່ອຂໍຮັບເອົາໂຄງການ.
- ຂັ້ນແຂວງ ພະແນກກ່ຽວຂ້ອງຕ້ອງສົມທົບກັບພະແນກການຕ່າງປະເທດກວດກາເບິ່ງຮ່າງ MOU ເບື້ອງຕົ້ນຄືນແລ້ວນຳສະເໜີຫາ ທ່ານຮອງເຈົ້າແຂວງຜູ້ຊີ້ນຳວຽກງານຄຸ້ມຄອງອົງການ NGO ພາຍໃນ 15 ວັນລັດຖະການ ເພື່ອພິຈາລະນາ ແລະ ເຊັນ ສົ່ງໃຫ້ກະຊວງກ່ຽວຂ້ອງຢູ່ສູນກາງພິຈາລະນາຕໍ່ໄປ.

3. ຂັ້ນຕອນທີ III:

– ກະຊວງກ່ຽວຂ້ອງຕ້ອງລົມທົບອົງການ NGO ເປີດກອງປະຊຸມຜ່ານຮ່າງ MOU ເບື້ອງຕົ້ນທີ່ໄດ້ຮັບຈາກແຂວງ ພາຍໃນ 15 ວັນລັດຖະການ, ໂດຍການເຂົ້າຮ່ວມຂອງ:

1) ກະຊວງການຕ່າງປະເທດ;
2) ບັນດາກົມກ່ຽວຂ້ອງພາຍໃນກະຊວງດັ່ງກ່າວ;
3) ອົງການ NGO.

– ຈາກນັ້ນ, ທັງອົງການ NGO ແລະ ກະຊວງກ່ຽວຂ້ອງມີເວລາ ຝ່າຍລະ 15 ວັນລັດຖະການ ໃນການປັບປຸງຮ່າງ MOU ເບື້ອງຕົ້ນຄືນ ຕາມຄຳເຫັນຂອງກອງປະຊຸມ.

– ກະຊວງກ່ຽວຂ້ອງເຮັດໜັງສືຫາກະຊວງການຕ່າງປະເທດເພື່ອຂໍອະນຸມັດຮັບເອົາໂຄງການຊ່ວຍເຫຼືອດັ່ງກ່າວ.

4. ຂັ້ນຕອນທີ IV:

- ການອະນຸມັດໂຄງການ: ກະຊວງການຕ່າງປະເທດເມື່ອໄດ້ຮັບໜັງສືສະເໜີຂໍອະນຸມັດຮັບເອົາໂຄງການຈາກກະຊວງກ່ຽວຂ້ອງຄົບຖ້ວນແລ້ວ ຕ້ອງດຳເນີນການຄົ້ນຄວ້າ ນຳສະເໜີຂັ້ນເທິງ ເພື່ອອອກຂໍ້ຕົກລົງອະນຸມັດຮັບເອົາໂຄງການ ຢ່າງຊ້າສຸດບໍ່ໃຫ້ເກີນ 10-15 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວ ຕາມທາງຄວນດ້ວຍ.

ລັດຖະມົນຕີ

ສະເຫລີມໄຊ ກົມມະສິດ

<u>ສຳເນົາສົ່ງ</u>:

- ຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂັ້ນສູນກາງ, ປ່ອນລະ 01 ສະບັບ
- ຫ້ອງວ່າການປົກຄອງແຂວງ, 18 ແຂວງ ທົ່ວປະເທດ, ປ່ອນລະ 01 ສະບັບ
- ພະແນກການຕ່າງປະເທດແຂວງ, 18 ແຂວງ ທົ່ວປະເທດ, ປ່ອນລະ 01 ສະບັບ
- ຫ້ອງການປົກຄອງເມືອງ ຂອງ 18 ແຂວງ ທົ່ວປະເທດ, ປ່ອນລະ 01 ສະບັບ

# ເອກະສານປະກອບມີ:

1. ໜັງສືສະເໜີຈາກກະຊວງ(ຄູ່ຮ່ວມງານ)ເຖິງກະຊວງການຕ່າງປະເທດ

2 ຮ່າງບົດບັນທຶກຄວາມເຂົ້າໃຈ

3. ໜັງສືສະເໜີຂໍອະນຸມັດຮັບເອົາການຊ່ວຍເຫລືອ ຈາກອົງການ ເຖິງກະຊວງ (ຄູ່ຮ່ວມງານ).

4. ໜັງສືຢັ້ງຢືນເຫັນດີຮັບການຊ່ວຍເຫລືອ/ໂຄງການຂອງອົງການ ຈາກທ້ອງຖິ່ນ

5. ໜັງສືຢັ້ງຢືນຂອງຜູ້ໃຫ້ການຊ່ວຍເຫລືອ

6. ງົບປະມານລະອຽດ: ແບ່ງເປັນປີ (70% ກິດຈະກຳ, 30% ບໍລິຫານ)

7. ເອກະສານຊ້ອນທ້າຍທີ່ກ່ຽວຂ້ອງ: ໜັງສືສ້າງຕັ້ງ+ທະບຽນຂອງອົງການ, ແຜນຜັງການກໍ່ສ້າງ, ບັນຊີເປົ້າໝາຍຊ່ວຍເຫລືອ, ຮູບ, ແຜນທີ່,..........

# IV. ສິ່ງທ້າທາຍ ແລະ ສິ່ງຄວນເອົາໃຈໃສ່

## ສິ່ງທ້າທາຍ

- ຄວາມສາມາດໃນການຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ຂອງສູນກາງ ແລະ ທ້ອງຖິ່ນຍັງມີຂີດຈໍາກັດ.
- ຄວາມເຂົ້າໃຈຂອງເຈົ້າໜ້າທີ່ຈໍານວນໜຶ່ງຕໍ່ອົງການ ແລະ ໂຄງການ ຍັງບໍ່ທັນມີຄວາມເອກະພາບກັນ.
- ຂອດການປະສານງານຍັງຊັກຊ້າ ລະຫວ່າງ ຂະແໜງການ, ສູນກາງ ແລະ ທ້ອງຖິ່ນ.

# ສິ່ງຄວນເອົາໃຈໃສ່

- ທະບຽນພາຫະນະສຳລັບໂຄງການ
- ການຮ່ວມມືລະຫວ່າງ ພາກລັດ/ຄູ່ຮ່ວມງານ ແລະ ອົງການ
- ເປົ້າໝາຍຊ່ວຍເຫລືອຜູ້ທຸກຍາກ ແລະ ດ້ອຍໂອກາດ
- ຄວາມສາມະຄີ: ບໍ່ໃຫ້ມີການແບ່ງແຍກຊົນເຜົ່າ/ສາດສະໜາ ນັບຖືຮີດຄອງປະເພນີ ແລະ ປະຕິບັດນິຕິກຳ ຂອງ ສປປ ລາວ
- ມາດຕະການຕໍ່ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ.

# ຂໍຂອບໃຈ

# ຄໍາເຫັນ

# ຖາມ & ຕອບ